# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ຊາ

(ສະບັດທົດລອງ)



ຂຽນໂດຍ: ທ່ານ ເຈືອງ

ຂໍ້ມູນຈາກ: ບ້ານປາກມີ້ ເມືອງ ຊະນະຄາມ ແຂວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ຂ໑

ແຕ້ມໂດຍ: ທ້າວ ສິດອາພອນ ດວງປະສິດ

ຮີບໂຮມ ແລະຈັດພິມໜ້າໂດຍ: ສິດອາພອນ ດວງປະສິດ

ຜູ້ຮຽບຮຽງ: ອ.ຈ. ໂພໄຊ ຈັນທະວົງສາ

ອ.ຈ. ລັ່ງ ແສງດາລາ

ເຈົ້າຂອງ: ຫ້ອງການສຶກສາເມືອງຊະນະຄາມ ແຂວງວຽງຈັນ

ຈັນ ແລະສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

A world for Children

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງໃນເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະສຶກສາແຂວງວຽງຈັນ.

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດນຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍເອົາສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາບກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຈະໄດ້ຮັບການຕິຊົມຈາກທຸກທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ສາລະໜ້າຮູ້

ຂາແມ່ນອຸປະກອນການຫາປາຊະນິດໜຶ່ງທີ່ປູ່ຍ່າຕາຍາຍເພິ່ນໄດ້ນຳມາຫາປາຢູ່ຕາມລຳນ້ຳຫ້ວຍຮ່ອງຄອງບຶງເພື່ອລ້ຽງຊີບ ເມື່ອເຫັນວ່າການຫາປາໂດຍການໃຊ້ປະເພດຂາໄດ້ປາຫຼາຍ ແລະປະຫຍັດຕົ້ນທຶນຈຶ່ງໄດ້ຫັນປ່ຽນມາໃຊ້ຂານີ້ເປັນເຄື່ອງມືໃນການໃຊ້ຫາປາ ແລະຊາວບ້ານບ້ານປາກມີ້ກໍໄດ້ໃຊ້ຂາຫາປາຄຕາມແມ່ນ້ຳຂອງ.

## ຫຼັກການວິທະຍາສາດ

ການທີ່ເຮົາເລືອກເອົາໄມ້ໄຜ່,ໄມ້ຊາງກໍຍ້ອນວ່າໄມ້ສອງປະເພດນີ້ມີຄວາມໜຽວເວລາເຮົາສານ ຫຼື ທົບເຂົ້າຫາກັນມັນກໍບໍ່ມັກຫັກ.

ອຸປະກອນ

1. ໄມ້ຊາງ,ໄມ້ໄຜ່ ຫຼື ໄມ້ເຮ້ຍ



PDF created with pdfFactory Pro trial version www.pdffactory.com

2. ເຊືອກ



3. ໄມ້ຈິງ (ສຳລັບເຮັດຄານ)



4. ກາບໝາກພ້າວ



PDF created with pdfFactory Pro trial version www.pdffactory.com

**ຂັ້ນຕອນການກະກຽມ**

- ຈັກຕອກສານ ແລະຕອກຊັ້ງຕາມຄວາມຕ້ອງການ
- ຊອກໄມ້ຈີງຂະໜາດຊ່ຳກົ່ວແມນ ຫຼື ຂຶ້ນກັບຂະໜາດຂອງຂາ ວ່າໃຫຍ່ ຫຼື ນ້ອຍຊ່ຳໃດ

**ຂັ້ນຕອນສານ**

ກໍ່ທາງປາກກ້ຽວໃສ່ໄມ້ຄານຂາໃຫ້ໄດ້ປະມານ 40 ຊັງຕີແມັດແລ້ວຫຸບກົ້ນຈີ່ງໄວ້ເປັນຮູແລ້ວເອົາກາບພ້າບມາອັດໄວ້,ຫຼັງຈາກນັ້ນກໍ່ສານອ້ອມຂຶ້ນຈົນສຸດໄມ້ຊັ້ງ ຫຼື ຂຶ້ນກັບຄວາມຕ້ອງການ ສານທາງກົ້ນແມ່ນໃຫ້ສານຖີ່ແຕ່ສ່ວນທາງເທິງແມ່ນໃຫ້ສານຫ່າງກວ່າສຸດທ້າຍແມ່ນໃຫ້ມ້ວນຂອບ



PDF created with pdfFactory Pro trial version www.pdffactory.com



**<u>ວິທີໃສ່</u>**

ເອົາກ່າງໄມ້(ເຮີ)ຍັດໃສ່ທາງໃນແຕ່ບໍ່ໃຫ້ກ່າງໄມ້ແຈບຫຼາຍເພາະວ່າປາຈະບໍ່ເຂົ້າ(ເຮັດໂຄ່ງໄວ້)ເອົາເຊືອກ ຫຼື ຫວາຍມັດໃສ່ໄມ້ຄານ (ບ່ອນເຄິ່ງກາງຄານ)ເພື່ອເອົາໄວ້ດຶງລົງໃສ່ນໍ້າ ແລະດຶງຂຶ້ນບົກເວລາຢາມ. ບ່ອນໃສ່ແມ່ນບ່ອນນໍ້າຫຸ່ນ,ນໍ້າເວີນ ເອົາຫຼັກສັກລັດເຊືອກນັ້ນໄວ້ເພື່ອບໍ່ໃຫ້ຂາໄຫຼນໍ້າ,ແຕ່ເວລາຢາມຕ້ອງຖອດຫຼັກອອກແລ້ວລາກຂຶ້ນໄວໆປາອອກບໍ່ທັນຈະຂັງຢູ່ໃນນັ້ນ.



PDF created with pdfFactory Pro trial version www.pdffactory.com

# ກາບ: ຂາ

| | |
|---|---|
| ຂາຢູ່ນ້ຳ | ບໍ່ແມ່ນຂາຄົນ |
| ມີມາດົນ | ສານດ້ວຍໄມ້ໄຜ່ |
| ໜ່ອຍນ້ອຍໃຫຍ່ | ງານັ້ນບໍ່ມີ |
| ພື້ນສານຖີ່ | ປາກຫວາປ່າງສ່າງ |
| ເອົາໄມ້ກ່າງ | ຍັດໃສ່ທາງໃນ |
| ລາກລົງໄປ | ແຊ່ໄວ້ໃນນ້ຳ |
| ຍາມເຊົ້າຄ່ຳ | ດຶງຂຶ້ນໄວໆ |
| ປານ້ອຍໃຫຍ່ | ບໍ່ຮູ້ທາງອອກ |
| ມັນຈົນກອກ | ບໍ່ຮູ້ທາງໄປ |
| ຈົກເອົາໄດ້ | ຍັດຂ້ອງທັນທີ |
| ເຫຍື່ອບໍ່ມີ | ກຸ້ງປາຫລັ່ງເຂົ້າ |
| ນີ້ເພິ່ນເວົ້າ | ວ່າເສືອນອນກິນ |

PDF created with pdfFactory Pro trial version www.pdffactory.com

# ເຊີ້ງ: ຂາ

| | |
|---|---|
| ມາພວກເຮົາມາ | ເວົ້າເລື່ອງຫາປາ |
| ມາເວົ້າເລື່ອງຂາ | ສານດ້ວຍໄມ້ໄຜ່ |
| ງານັ້ນບໍ່ໃສ່ | ກົ້ນທຸບປາກເຫວີ |
| ຈີ່ເອົາໄວ້ເດີ | ຂາບໍ່ມີຂີນ |
| ມີມາແຕ່ດິນ | ໃສ່ແຕ່ກ່າງໄມ້ |
| ເຫຍື່ອນັ້ນບໍ່ໃສ່ | ແຊ່ໄວ້ນໍ້າເວີນ |
| ມັນງ່າຍເຫລືອເກີນ | ຮອດຍາມຢາມໂລດ |
| ຢາມເອົາມັນໂລດ | ທັງເຊົ້າແລະແລງ |

ໂຮ....ຮິວ.....

PDF created with pdfFactory Pro trial version www.pdffactory.com

# ເພງ: ໍ໑

| | |
|---|---|
| ໄມ້ໄຜ່ບ້ານ | ຈັກຕອກຍາວໆ |
| ເຮົາສານຈັດເຂົ້າ | ກົ້ນຖີ່ເທິງຫ່າງ |
| ບໍ່ໃຫ້ມີງາ | ປາກຫວາປ່າງສ່າງ |
| ແລ້ວເອົາໄມ້ກ່າງ | ຍັດໃສ່ເຕັມໃນ |
| ເຮົາລາກລົງໄປ | ແຊ່ໄວ້ໃນນໍ້າ |
| ມີປາຫຼາຍຊ່ໍາ | ຊົ້ນຢູ່ທາງໃນ |
| ເຊົ້າແລງຍາມ | ລາກຂຶ້ນໄວໆ |
| ມີປານ້ອຍໃຫຍ່ | ດີ້ນຢູ່ໃນກອງກັນ (2) |

PDF created with pdfFactory Pro trial version www.pdffactory.com

## ລຳ: ໒໑

| | | |
|---|---|---|
| ລະແມ່ນວ່າ | ຂາຢູ່ນ້ຳ | ແມ່ນເຄື່ອງຫາປາ |
| | ຕາມຕຳລາ | ໄມ້ຊາງໄຜ່ບ້ານ |
| | ຈັກຕອກສານ | ກົ້ນຫຸບປາກຖີ່ |
| | ງາບໍ່ມີ | ປາກຫວາປ່າງສ່າງ |
| | ເອົາໄມ້ກ່າງ | ຍັດໃສ່ທາງໃນ |
| | ລາກລົງໄປ | ແຊ່ໄວ້ໃນນ້ຳ |
| | ແລງເຊົ້າຢາມ | ຮີບດຶງໄວວາ |
| | ກຸ້ງປູປາ | ແລ່ນອອກບໍ່ທັນ |
| | ນອນກອງກັນ | ດີ້ນຕາຍດ່າວໆ |
| | ດ່າວໆ | ກະດີ້ນຕາຍດ່າວ |

PDF created with pdfFactory Pro trial version www.pdffactory.com

# <u>ຮູບແລະປະຫວັດຜູ້ຂຽນ</u>



ຊື່: ເຈືອງ

ນາມສະກຸນ: ທອງສະຫວັນ

ອາຍຸ: 66 ປີ

ອາຊີບ: ພະນັກງານບຳນານ

## <u>ເຫດຜົນການຂຽນຫົວຂໍ້ນີ້:</u>

ເພາະວ່າຂາແມ່ນອຸປະກອນຊະນິດໜຶ່ງປູ່ຍ່າຕາຍາຍໄດ້ໃຊ້ຫາປູຫາປາມາແຕ່ສະໄໝບູຮານນານແລ້ວມາຮອດປັດຈຸບັນເພິ່ນຍັງນຳໃຊ້ກັນຢູ່. ເຫດຜົນການຂຽນຫົວຂໍ້ນີ້ຂື້ນມາແມ່ນຢາກໃຫ້ບັນດານ້ອງອຍນັກຮຽນຮູ້ຈັກການເຮັດຂາ ແລະວິທີການນຳໃຊ້ເພື່ອເອົາໄວ້ໃຊ້ເຂົ້າຊີວິດປະຈຳວັນອີກດ້ວຍ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com